ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 4257 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 13 ພະຈິກ 2026

ຂໍ້ຕົກລົງ
ວ່າດ້ວຍການຄຸ້ມຄອງສິນຄ້າຫຸ້ມຫໍ່

- ອີງຕາມ ກົດໝາຍ ວ່າດ້ວຍການວັດແທກ ສະບັບເລກທີ 36/ສພຊ, ລົງວັນທີ 13 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 1 ກັນຍາ 2025;
- ອີງຕາມ ໜັງສືລາຍງານຂອງກົມມາດຕະຖານ ແລະ ວັດແທກ ສະບັບເລກທີ 5800/ກມວ, ລົງວັນທີ 19 ຕຸລາ 2026.

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ໃຫ້ຖືກຕ້ອງສອດຄ່ອງກົດໝາຍ ແລະ ລະບຽບການ ເພື່ອອຳນວຍຄວາມສະດວກ ໃນການຊື້ ຂາຍ ແລະ ຄຸ້ມຄອງສິນຄ້າຫຸ້ມຫໍ່ທີ່ພົວພັນເຖິງຄຸນລັກສະນະ, ຂະໜາດ, ນ້ຳໜັກ, ມວນສານ ແລະ ບໍລິມາດ ທີ່ກຳນົດໄວ້ໃນສະຫຼາກຂອງສິນຄ້າຫຸ້ມຫໍ່ ແນໃສ່ເຮັດໃຫ້ສັງຄົມມີຄວາມຍຸຕິທຳ, ປອດໄພ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ ສາມາດເຊື່ອມໂຍງກັບຫຼັກການກວດສອບສິນຄ້າຫຸ້ມຫໍ່ ລະຫວ່າງ ບັນດາປະເທດອາຊຽນ ແລະ ສາກົນ.

ມາດຕາ 2 ການຄຸ້ມຄອງສິນຄ້າຫຸ້ມຫໍ່

ການຄຸ້ມຄອງສິນຄ້າຫຸ້ມຫໍ່ ແມ່ນການຕິດຕາມ, ກວດກາ, ກວດສອບ ແລະ ຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ທີ່ຖືກບັນຈຸໃນພາຊະນະ ຫຼື ສິ່ງຫຸ້ມຫໍ່ໃດໜຶ່ງ ທີ່ມີການບົ່ງບອກເຖິງຄຸນລັກສະນະ ແລະ ປະລິມານສິນຄ້າໄວ້ໃນສະຫຼາກ ທີ່ໄດ້ຮັບ ຫຼື ບໍ່ໄດ້ຮັບ ການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ກ່ອນວາງຈຳໜ່າຍ ປະລິມານສິນຄ້າຫຸ້ມຫໍ່ ຊຶ່ງບໍ່ສາມາດປ່ຽນແປງໄດ້ຖ້າຫາກບໍ່ມີການເປີດ ຫຼື ດັດແກ້ສິ່ງຫຸ້ມຫໍ່ນັ້ນ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບຕ່າງໆທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າຫຸ້ມຫໍ່** ໝາຍເຖິງ ຜະລິດຕະພັນສິນຄ້າທີ່ຖືກຫຸ້ມຫໍ່ ຫຼື ບັນຈຸຢູ່ໃນພາຊະນະຫຸ້ມຫໍ່ໃດໜຶ່ງ ທີ່ມີການຊື້ ຂາຍ ຕາມປະລິມານບັນຈຸ ຫຼື ຫຸ້ມຫໍ່ ກ່ອນການຂາຍຍົກ ຫຼື ຂາຍຍ່ອຍ;

2. **ປະລິມານທີ່ສະແດງ (Qnom)** ໝາຍເຖິງ ປະລິມານທີ່ກຳນົດໃນສະຫຼາກຂອງສິນຄ້າຫຸ້ມຫໍ່ ທີ່ລະບຸເປັນຫົວໜ່ວຍວັດແທກ ເຊັ່ນ: ຄວາມຍາວ, ບໍລິມາດ, ນ້ຳໜັກ ແລະ ຈຳນວນ;

3. **ປະລິມານຕົວຈິງ (Qi)** ໝາຍເຖິງ ປະລິມານທີ່ໄດ້ຈາກການກວດສອບຕົວຈິງ;

4. **ຊຸດສິນຄ້າຫຸ້ມຫໍ່ (Lot)** ໝາຍເຖິງ ສິນຄ້າຫຸ້ມຫໍ່ ທີ່ບັນຈຸໃນພາຊະນະຫຸ້ມຫໍ່ ທີ່ມີຂະໜາດ, ຊື່ ຫຼື ເຄື່ອງໝາຍການຄ້າ ທີ່ຜະລິດອອກໃນໄລຍະເວລາດຽວກັນ;

5. **ຈຳນວນຊຸດການຜະລິດ (N)** ໝາຍເຖິງ ສິນຄ້າຫຸ້ມຫໍ່ໃນຊຸດສິນຄ້າຫຸ້ມຫໍ່ສິນຄ້າ ທີ່ຈະນຳໃຊ້ເພື່ອສະໜອງຂໍ້ມູນພື້ນຖານໃນການກວດສອບ;

6. **ຈຳນວນຕົວຢ່າງກວດສອບ (n)** ໝາຍເຖິງ ສິນຄ້າຫຸ້ມຫໍ່ສິນຄ້າຈາກການສຸ່ມກວດຂອງຈຳນວນຊຸດການຜະລິດ;

7. **ການສຸ່ມ** ໝາຍເຖິງ ການເກັບຕົວຢ່າງຂອງສິນຄ້າຫຸ້ມຫໍ່ ຕາມວິທີການທີ່ກຳນົດໄວ້ໃນຕາຕະລາງທີ 04 ຂອງຂໍ້ຕົກລົງສະບັບນີ້;

8. **ຄ່າອະນຸຍາດຜິດພາດ (T)** ໝາຍເຖິງ ສິນຄ້າຫຸ້ມຫໍ່ທີ່ສາມາດຍອມຮັບຄ່າຜິດພາດ ລະຫວ່າງ ປະລິມານທີ່ສະແດງ ແລະ ປະລິມານຕົວຈິງ;

9. **ການຫຸ້ມຫໍ່ທີ່ບໍ່ສອດຄ່ອງ** ໝາຍເຖິງ ການຫຸ້ມຫໍ່ທີ່ບໍ່ຖືກຕ້ອງຕາມລະບຽບການທີ່ກຳນົດໄວ້ ເຊັ່ນ: ມີຄ່າຜິດພາດຫຼາຍກ່ວາຄ່າອະນຸຍາດ (T) ທີ່ໄດ້ກຳນົດໄວ້ໃນຕາຕະລາງທີ 02 ມາດຕາ 06 ຂອງຂໍ້ຕົກລົງສະບັບນີ້;

10. **ສະຫຼາກ (label)** ໝາຍເຖິງ ສິ່ງທີ່ຂຽນ, ພິມ ຫຼື ສິ່ງທີ່ສະແດງດ້ວຍຮູບພາບທີ່ແປະໃສ່, ຕິດໃສ່, ຫຼໍ່ໃສ່, ປ້ຳເປັນຮູບໃສ່, ປະກອບມາພ້ອມສິ່ງຫຸ້ມຫໍ່ ທີ່ບັນຈຸສິນຄ້າຫຸ້ມຫໍ່ໃດໜຶ່ງ ເພື່ອເປັນການໂຄສະນາຍີ່ຫໍ້, ການບົ່ງບອກ ຫຼື ການໃຫ້ຂໍ້ມູນ ກ່ຽວກັບສິນຄ້າຫຸ້ມຫໍ່ ຫຼື ສິ່ງທີ່ບັນຈຸຢູ່ໃນສິ່ງຫຸ້ມຫໍ່;

11. **ວັດສະດຸຫຸ້ມຫໍ່** ໝາຍເຖິງ ສິ່ງຫຸ້ມຫໍ່ ຫຼື ພາຊະນະບັນຈຸສິ່ງຫຸ້ມຫໍ່;

12. **ຈຳນວນຕົວຢ່າງບໍ່ສອດຄ່ອງທີ່ຍອມຮັບໄດ້** ໝາຍເຖິງ ຈຳນວນຕົວຢ່າງຂອງສິນຄ້າຫຸ້ມຫໍ່ທີ່ກວດສອບແລ້ວມີຄ່າຜິດພາດຫຼຸດ ຫຼື ເກີນຂອບເຂດອະນຸຍາດທີ່ຍອມຮັບ ແຕ່ຍັງບໍ່ທັນເກີນຂອບເຂດອະນຸຍາດຕ່ຳສຸດ;

13. **ຄ່າສະເລ່ຍທັງໝົດ** ໝາຍເຖິງ ປະລິມານຕົວຈິງສະເລ່ຍຂອງຈຳນວນສິນຄ້າຫຸ້ມຫໍ່ທີ່ເອົາມາຈາກຜະ ລິດຕະພັນທີ່ນຳມາກວດສອບ;

14. **ເຈົ້າໜ້າທີ່** ໝາຍເຖິງ ພະນັກງານທີ່ຮັບຜິດຊອບ ກ່ຽວກັບການກວດສອບສິນຄ້າຫຸ້ມຫໍ່;

15. **ຜູ້ດຳເນີນທຸລະກິດ** ໝາຍເຖິງ ຜູ້ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ໃຫ້ບໍລິການ ກ່ຽວກັບ ສິນຄ້າຫຸ້ມຫໍ່.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນ ການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ໃຫ້ບໍລິການ ກ່ຽວກັບສິນຄ້າຫຸ້ມຫໍ່ ທຸກປະເພດ ຢູ່ ສປປ ລາວ ຕາມລາຍການທີ່ໄດ້ກຳນົດໄວ້ໃນເອກະສານຊ້ອຍທ້າຍ 1.

ໝວດທີ 2
ການກຳນົດປະລິມານ ແລະ ຄ່າອະນຸຍາດຂອງສິນຄ້າຫຸ້ມຫໍ່

ມາດຕາ 5 ການກຳນົດປະລິມານຂອງສິນຄ້າຫຸ້ມຫໍ່

ການກຳນົດປະລິມານຂອງສິນຄ້າຫຸ້ມຫໍ່ ໃຫ້ປະຕິບັດ ດັ່ງນີ້:

1. ສິນຄ້າຫຸ້ມຫໍ່ ທີ່ເປັນຂະໜາດຕ້ອງລະບຸເປັນຄວາມຍາວ;

2. ສິນຄ້າຫຸ້ມຫໍ່ ທີ່ເປັນທາດແຂງ, ເຄິ່ງແຂງ, ອາຍແກັສ ຊຶ່ງລວມມີທັງທາດແຂງ ແລະ ທາດແຫຼວ ປະສົມກັນ ຕ້ອງລະບຸເປັນນ້ຳໜັກ;

3. ປະລິມານສິນຄ້າ ທີ່ເປັນສະເປ ຕ້ອງໄດ້ຖືກລະບຸໄວ້ເປັນນ້ຳໜັກ ຫຼື ຫົວໜ່ວຍບໍລິມາດ;

4. ສິນຄ້າຫຸ້ມຫໍ່ ທີ່ເປັນທາດແຫຼວຕ້ອງລະບຸເປັນບໍລິມາດ;

5. ສິນຄ້າຫຸ້ມຫໍ່ ທີ່ປະກອບດ້ວຍເນື້ອສິນຄ້າ ແລະ ຂອງແຫຼວ ໂດຍສ່ວນປະກອບຂອງແຫຼວບໍ່ໄດ້ໃຊ້ເພື່ອບໍລິໂພກ ຕ້ອງສະແດງທັງປະລິມານສຸດທິ ແລະ ປະລິມານຂອງເນື້ອສິນຄ້າ;

6. ປະລິມານທີ່ສະແດງຂອງສິນຄ້າຫຸ້ມຫໍ່ ທີ່ມີປະລິມານຕົວຈິງ ນ້ອຍກ່ວາ ຫ້າກຼາມ (5g) ຫຼື ຫ້າ ມິນລິລິດ (5ml) ຫຼື ຫ້າມິນລິແມັດ (5mm) ບໍ່ຈຳເປັນຈະຕ້ອງລະບຸຄ່າປະລິມານຄ່ານ້ຳໜັກໃນສະຫຼາກ ຫຸ້ມຫໍ່, ແຕ່ຖ້າຫາກຕ້ອງການໃຫ້ໃສ່ຄ່າສະເລ່ຍຂອງສິນຄ້າຫຸ້ມຫໍ່ທັງໝົດຫຼາຍກ່ວາ ຫຼື ເທົ່າກັບປະລິມານຄ່ານ້ຳໜັກ;

7. ປະລິມານຂອງສິນຄ້າຫຸ້ມຫໍ່ໃດໜຶ່ງ ທີ່ປະກອບດ້ວຍຫຼາຍຫົວໜ່ວຍ ຕ້ອງໄດ້ສະແດງເປັນຕົວເລກ ຖ້ວນ ຊຶ່ງລະບຸເປັນປະລິມານ ຫຼື ຫົວໜ່ວຍນ້ຳໜັກ;

8. ກໍລະນີ ສິນຄ້າຫຸ້ມຫໍ່ໃຫຍ່ປະກອບດ້ວຍຫຼາຍຫີບຫໍ່ນ້ອຍ ທີ່ບັນຈຸຫຼາຍອັນຕ້ອງໄດ້ລະບຸລາຍລະອຽດໄວ້ຢູ່ໃນສະຫຼາກຫຸ້ມຫໍ່;

9. ການກຳນົດຫົວໜ່ວຍຂອງປະລິມານຂຶ້ນກັບປະເພດ ແລະ ຂະໜາດຂອງປະລິມານຂອງສິນຄ້າ ສຳລັບສິນຄ້າຊຶມໃຊ້ພາຍໃນປະເທດ ສາມາດນຳໃຊ້ໄດ້ທັງໂຕອັກສອນຫຍໍ້ ທີ່ເປັນພາສາລາວ ຫຼື ພາສາອັງກິດ ຫຼື ສາມາດນຳໃຊ້ໄດ້ທັງສອງນຳກັນໃນການສະແດງຫົວໜ່ວຍຂອງສິນຄ້າ, ສ່ວນຜະລິດຕະພັນສິນຄ້າທີ່ໄດ້ຮັບການຢັ້ງຢືນກາໝາຍສິນຄ້າຫຸ້ມຫໍ່ ແລະ ສິນຄ້າສົ່ງອອກ ຕ້ອງໄດ້ໃຊ້ໂຕອັກສອນຫຍໍ້ທີ່ເປັນພາສາອັງກິດ ລາຍລະອຽດການກຳນົດໄວ້ໃນຕາຕະລາງທີ 1 ດັ່ງນີ້:

ຕາຕະລາງທີ 1 ການກຳນົດຫົວໜ່ວຍ

ປະເພດ ການ ວັດແທກ	**ປະລິມານຂອງສິນຄ້າ**	**ຫົວໜ່ວຍໂຕອັກສອນຫຍໍ້**	
		ພາສາລາວ	**ພາສາອັງກິດ**
ບໍລິມາດ	ປະລິມານ< 1000 ml	ມລ ຫຼື ຊລ	mL (ml) ຫຼື cL (cl)
	1000 ml ≤ ປະລິມານ	ລ	L
ນ້ຳໜັກ	ປະລິມານ < 1 mg	ມກ	mg
	1 g ≤ ປະລິມານ <1000 g	ກ	g
	1000 g ≤ ປະລິມານ	ກກ	kg
ຄວາມຍາວ	ປະລິມານ < 1 mm	ມຄມ ຫຼື ມມ	µm ຫຼື mm
	1 mm ≤ ປະລິມານ < 100 cm	ມມ ຫຼື ຊມ	mm ຫຼື cm
	100 cm ≤ ປະລິມານ	ມ	m
ເນື້ອທີ່	ປະລິມານ < 100 cm^2	ມມ^2 ຫຼື ຊຕມ^2	mm^2 ຫຼື cm^2
	100 cm^2 ≤ ປະລິມານ < 1 m^2	ດຊມ^2	dm^2
	1 m^2 ≤ ປະລິມານ	ມ^2	m^2

ມາດຕາ 6 ການກຳນົດຄ່າອະນຸຍາດຜິດພາດຂອງສິນຄ້າຫຸ້ມຫໍ່

ປະລິມານທີ່ລະບຸໄວ້ໃນສະຫຼາກຫຸ້ມຫໍ່ ຕ້ອງກົງກັບປະລິມານທີ່ສະແດງ ຊຶ່ງຄ່າອະນຸຍາດຜິດພາດໄດ້ກຳນົດໄວ້ໃນຕາຕະລາງທີ 2 ດັ່ງນີ້:

ຕາຕະລາງທີ 2 ຄ່າອະນຸຍາດຜິດພາດ

1. ປະລິມານທີ່ສະແດງ (Q_{nom}) ຄິດໄລ່ເປັນກຼາມ (g) ຫຼື ມິນລິລິດ (ml)		**ຄ່າອະນຸຍາດຜິດພາດ**	
ແຕ່	**ເຖິງ**	**ຄິດໄລ່ເປັນເປີເຊັ້ນ (%) ຂອງປະລິມານທີ່ສະແດງ (Q_{nom})**	**g ຫຼື ml**
5	50	9.0	-
50	100	-	4.5
100	200	4.5	-
200	300	-	9.0
300	500	3.0	-
500	1,000	-	15.0
1,000	10,000	1.5	-
10,000	15,000	-	150
15,000	50,000	1	-

2. ປະລິມານທີ່ສະແດງ (Q_{nom}) ຄິດໄລ່ເປັນຄວາມຍາວ(m)	**ຄ່າອະນຸຍາດຜິດພາດ**
$Q_{nom} \leq 5$ m	ບໍ່ອະນຸຍາດໃຫ້ຜິດພາດ
$Q_{nom} > 5$ m	2% ຂອງປະລິມານທີ່ສະແດງ (Q_{nom})

3. ປະລິມານທີ່ສະແດງ (Q_{nom}) ຄິດໄລ່ເປັນເນື້ອທີ່	**ຄ່າອະນຸຍາດຜິດພາດ**
ທຸກຄ່າປະລິມານທີ່ສະແດງ (Q_{nom})	3% ຂອງປະລິມານທີ່ສະແດງ (Q_{nom})

4. ປະລິມານທີ່ສະແດງ ຄິດໄລ່ເປັນຈຳນວນ	**ຄ່າອະນຸຍາດຜິດພາດ**
$Q_{nom} \leq 50$	ບໍ່ອະນຸຍາດໃຫ້ຜິດພາດ
$Q_{nom} > 50$	1% ເປີເຊັນຂອງ Qn ສາມາດປັດເລກເສດເປັນຈຳນວນຖ້ວນໃຫ້ໃກ້ຄຽງທີ່ສຸດ

ໝາຍເຫດ: ເມື່ອນຳໃຊ້ຕາຕະລາງດັ່ງກ່າວນີ້, ບັນດາຄ່າຂອງຄ່າຜິດພາດ ທີ່ສະແດງເປັນອັດຕາສ່ວນຮ້ອຍ, ນ້ຳໜັກ ຫຼື ບໍລິມາດ ແມ່ນຈະຕ້ອງໄດ້ປັບຄ່າດັ່ງກ່າວເປັນເລກເສດ 0.1 ກຼາມ (g) ຫຼື ມິນລິລິດ (ml). ການກວດສອບປະລິມານຂອງສິນຄ້າຫຸ້ມຫໍ່ທີ່ຄິດໄລ່ເປັນບໍລິມາດ ຜົນການຄິດໄລ່ທີ່ໄດ້ຈາກການກວດສອບໃນເວລານັ້ນ (ພາຍໃຕ້ອຸນຫະພູມຂອງຫ້ອງທົດລອງໃນເວລາກວດສອບ) ແມ່ນຕ້ອງໄດ້ປ່ຽນເປັນຜົນຄິດໄລ່ໃນອຸນຫະພູມ 20 ອົງສາແຊນຊິດ (20 °C ± 1 °C) (ຈາກສູດ ຄິດໄລ່ທີ່ໄດ້ກຳນົດໄວ້) ເປັນຕົ້ນ ຜະລິດຕະພັນນ້ຳມັນ, ເຄື່ອງເຢັນ ແລະ ຜະລິດຕະພັນແຊ່ເຢັນອື່ນໆ

ມາດຕາ 7 ການກຳນົດຂະໜາດໂຕເລກ ແລະ ໂຕອັກສອນຂອງປະລິມານທີ່ສະແດງ

1. ຫົວໜ່ວຍປະລິມານຂອງຕົວເລກຕ້ອງຕັ້ງທ່ຽງ, ຍະຫວ່າງ ລະຫວ່າງ ຕົວເລກ ແລະ ຫົວໜ່ວຍວັດແທກທີ່ສາມາດຈຳແນກໄດ້;

2. ການສະແດງປະລິມານຂອງສິນຄ້າເປັນຫົວໜ່ວຍຄວາມຍາວ ແລະ ຈຳນວນ ໃຫ້ມີຂະໜາດຄວາມສູງຂອງໂຕອັກສອນ ແລະ ໂຕເລກ ບໍ່ນ້ອຍກວ່າ 2 ມິນລິແມັດ (mm);

3. ສິນຄ້າຕ້ອງທີ່ສະແດງປະລິມານເປັນນ້ຳໜັກ ແລະ ບໍລິມາດ ໃຫ້ມີຂະໜາດຄວາມສູງຂອງໂຕອັກສອນ ແລະ ໂຕເລກ ຕາມຕາຕະລາງ 3 ດັ່ງນີ້:

ຕາຕະລາງ 3: ການກຳນົດຂະໜາດໂຕອັກສອນ ແລະ ໂຕເລກ ຂອງສິນຄ້າທີ່ສະແດງເປັນນ້ຳໜັກ ແລະ ບໍລິມາດ.

ປະລິມານທີ່ສະແດງ ເປັນ ກຼາມ (g) ຫຼື ມິນລິລິດ (ml)	ຂະໜາດຄວາມສູງຂອງໂຕອັກສອນ ແລະ ໂຕເລກຕ້ອງບໍ່ນ້ອຍກວ່າມິນລິແມັດ (mm)
ບໍ່ເກີນ 50	2
ເກີນ 50 ແຕ່ບໍ່ເກີນ 200	3
ເກີນ 200 ແຕ່ບໍ່ເກີນ 1,000	4
ເກີນ 1,000 ຂຶ້ນໄປ	6

ມາດຕາ 8 ຫຼັກການເກັບຕົວຢ່າງ

ການເກັບຕົວຢ່າງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ການເກັບຕົວຢ່າງແບບສຸ່ມ ເພື່ອເປັນຕົວແທນຂອງສິນຄ້າທັງໝົດ ທີ່ມີຄວາມເປັນໄປໄດ້ຄ້າຍຄືກັນ ຊຶ່ງຈະຖືກລວມຢູ່ໃນຕົວຢ່າງ;

2. ຈຳນວນຂອງຕົວຢ່າງສິນຄ້າຫຸ້ມຫໍ່ ທີ່ໄດ້ຈາກຊຸດການກວດສອບຖືກນຳໃຊ້ເພື່ອສະໜອງຂໍ້ມູນທີ່ໃຊ້ເປັນພື້ນຖານໃຫ້ແກ່ການຕັດສິນ ກ່ຽວກັບຄວາມສອດຄ່ອງຂອງຊຸດການກວດສອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

3. ສິນຄ້າຫຸ້ມຫໍ່ທີ່ຜະລິດ ຢູ່ພາຍໃນປະເທດ ໃຫ້ມີການກວດກາເກັບຕົວຢ່າງ ກວດສອບຢູ່ບ່ອນທີ່ດຳເນີນການຫຸ້ມຫໍ່;

4. ສິນຄ້າຫຸ້ມຫໍ່ທີ່ນຳເຂົ້າ ໃຫ້ເກັບຕົວຢ່າງ ເພື່ອກວດສອບຢູ່ນຳສາງສິນຄ້ານຳເຂົ້ານັ້ນ.

5. ການກວດສອບໃນບາງປະເພດສິນຄ້າ ສາມາດດຳເນີນກວດສອບໄດ້ກັບສະຖານທີ່ນັ້ນ, ແຕ່ໃນບາງຜະລິດຕະພັນທີ່ບໍ່ອາດສາມາດກວດໄດ້ກັບທີ່ ໃຫ້ນຳເອົາຕົວຢ່າງມາກວດສອບຢູ່ຫ້ອງທົດລອງຂອງອົງການຄຸ້ມຄອງການວັດແທກ ຫຼື ຫ້ອງທົດລອງອື່ນ ທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງການວັດແທກ.

ມາດຕາ 9 ວິທີການສຸ່ມຕົວຢ່າງ

ສິນຄ້າຫຸ້ມຫໍ່ທີ່ນຳມາເປັນຕົວຢ່າງກວດສອບ ຕ້ອງໄດ້ຖືກຄັດເລືອກໂດຍການນຳໃຊ້ວິທີການເກັບຕົວຢ່າງ ຕາມຫຼັກການທີ່ກຳນົດ ໄວ້ຕາຕະລາງທີ 4 ດັ່ງນີ້:

ຕາຕະລາງທີ 4: ຈຳນວນການສຸ່ມຕົວຢ່າງ ແລະ ຈຳນວນສິນຄ້າທີ່ອະນຸຍາດຜິດພາດ.

ຂະໜາດຊຸດການກວດສອບ [1] (N)	ຂະໜາດຕົວຢ່າງ [2] (n)	ຈຳນວນຂອງສິນຄ້າຫຸ້ມຫໍ່ ທີ່ອານຸຍາດ ຄ່າຜິດພາດ [3] T1:	ຕົວຄູນ ຄັດແກ້ຂອງຕົວຢ່າງ [4] (SCF)
20 ຫຼື ໜ້ອຍກວ່າ	ກວດສອບທັງໝົດ	0	ໃຊ້ບໍ່ໄດ້
40	32	1	0,22
60	35	1	0,30
80	47	2	0,25

100	49	2	0,28	
200	64	3	0,27	
300	67	3	0,29	
400	81	4	0,26	
500	81	4	0,27	
600 ຫา 100 000	98	5	600 ຫา 656	0,24
			657 ຫา 1 261	0,25
			1 262 ຫา 31 094	0,26
			31 095 ຫา 100 000	0,27

ໝາຍເຫດ:

1. ຈຳນວນສິນຄ້າຫຸ້ມຫໍ່ ທີ່ຜະລິດຕໍ່ຊຸດໜຶ່ງພາຍໃຕ້ເງື່ອນໄຂດຽວກັນ;

2. ຈຳນວນສິນຄ້າຫຸ້ມຫໍ່ ທີ່ຕ້ອງໄດ້ເກັບແບບສຸ່ມ ເພື່ອເປັນຕົວຢ່າງຂອງສິນຄ້າຫຸ້ມຫໍ່ທີ່ນຳມາກວດສອບຕໍ່ຊຸດ;

3. ຈຳນວນຂອງສິນຄ້າຫຸ້ມຫໍ່ທີ່ອານຸຍາດຄ່າຜິດພາດ (T1) ໝາຍເຖິງ ຈຳນວນຕົວຢ່າງທີ່ມີຄ່າຜິດພາດກຳນົດບໍ່ໃຫ້ເກີນຄ່າຜິດພາດທີ່ຍອມຮັບໄດ້. ຖ້າຫາກຄ່າຜິດພາດທີ່ຍອມຮັບໄດ້ມີຄ່າເທົ່າກັບ ຫຼື ໜ້ອຍກ່ວາ ຂອງຕົວຢ່າງທີ່ບໍ່ສອດຄ່ອງ ຖືວ່າການກວດສອບຊຸດນັ້ນຍອມຮັບໄດ້. ຖ້າຫາກຈຳນວນຕົວຢ່າງທີ່ພົບໃນກໍລະນີນີ້ ມີຄ່າເທົ່າກັບ ຫຼື ໜ້ອຍກວ່າ ຈຳນວນຕົວຢ່າງທີ່ອະນຸຍາດຜິດພາດ ຖືວ່າຊຸດກວດສອບນັ້ນຖືກຕ້ອງ;

4. ຕົວຄູນທີ່ໃຊ້ໃນການຄິດໄລ່ຫາຄວາມຜິດພາດສູງສຸດຂອງຕົວຢ່າງ, ໂດຍການຄູນຄ່າຜິດພາດມາດຕະຖານ ກັບສຳປະສິດດັດແກ້ຂອງຕົວຢ່າງ.

ມາດຕາ 10 ການນຳໃຊ້ເຄື່ອງມື

ອຸປະກອນທີ່ນຳໃຊ້ເຂົ້າໃນການກວດສອບປະລິມານສິນຄ້າຫຸ້ມຫໍ່ ໄດ້ກຳນົດໄວ້ໃນຕາຕະລາງ 5 ດັ່ງນີ້:

ຕາຕະລາງທີ 5: ຂໍ້ກຳນົດໃນການນຳໃຊ້ເຄື່ອງມື

ປະເພດການກວດສອບ	ຊື່ອຸປະກອນ	ລາຍລະອຽດ
1. ການວັດແທກຊັ່ງນ້ຳໜັກ	1. ເຄື່ອງຊັ່ງນ້ຳໜັກໄຟຟ້າ	1) 0.01 mg ~ 200 ng 2) 10 mg ~ 5 kg 3) 100 mg ~ 50 kg
	2. ແມ່ແບບນ້ຳໜັກ	1-2-2-5 ຫຼື1-1-2-5 ຊຸດນ້ຳໜັກລວມມີນ້ຳໜັກຈາກ 1mg ຫາ 20 kg
	3. ເຄື່ອງວັດອຸນຫະພູມ	ອຸນຫະພູມຢູ່ໃນຊ່ວງ (0~50) °C, ແລະ ຄ່າຜິດພາດ 0.01 °C ຫຼືຕ່ຳກວ່າ
	4. ເຄື່ອງວັດຄວາມຊຸ່ມ	ຄວາມຊຸ່ມມີການພົວພັນກັບຄວາມຊຸ່ມສຳພັດຢູ່ລະຫວ່າງ (20~100) %, ແລະ ຄ່າຜິດພາດ 1% ຫຼື ຕ່ຳກວ່າ.
	5. ບາຫຼອດ	ຄວນມີຄວາມສາມາດໃນການວັດແທກຄວາມກົດດັນຂອງບັນຍາກາດ
	6. ເຄື່ອງກອງນ້ຳ	ຂະໜາດທີ່ກຳນົດລະຫວ່າງ 500 µm ~ 9.5 mm

2.ການວັດແທກ ບໍລິມາດ	7. ຊິ່ງຊັ່ງວິເຄາະດ້ານບໍລິມາດ	0.01 mg ~ 200 g
	8. ເຄື່ອງວັດແທກຄວາມ ໜາແໜ້ນ	10 mg ~ 5 kg 100 mg ~ 50 kg
	9. ແມ່ແບບວັດແທກບໍລິ ມາດ	100 ml, 200 ml
	10. ແມ່ແບບເຄື່ອງແກ້ວບໍລິ ມາດ	25 l, 50 ml, 100 ml
	11. ເຄື່ອງວັດຄວາມໜາ ແໜ້ນແບບຊະນິດລູກຈຸ່ມ	(0 ~ 1.5) ກ/ມ^3
	12. ເຄື່ອງວັດອຸ່ນຫະພູມສຳ ລັບຂອງແຫຼວ	(0 ~ 50) °C ± 0.01 °C
	13. ເຄື່ອງກວດບໍລິມາດຂະ ໜາດນ້ອຍ (Burette)	5 ml, 50 ml
	14. ປິແປັດ (Pipette)	100 ml, 200 ml, 500 ml, 1 l, 2 l, 5 l
	15. ຟັສ (Flask)	100 ml, 200 ml, 500 ml, 1 l
	16. ຊີລິນເດີ (Cylinder)	100ml, 200 ml, 300 ml, 1 l
3. ການວັດແທກ ຂະໜາດ/ເນື້ອທີ່	17. ເຄື່ອງວັດເລື່ອນ (Vernier calipers)	ອຸ່ນຫະພູມຕ້ອງ (80 ~ 150)°C ± 1°C
	18. ໄມ້ບັນທັດ, ກ໋ໍສາຍແມັດ	30 cm ປະເພດເປັນເຫຼັກ 5 m ສາຍແມັດ
	19. ເຄື່ອງວັດຄວາມໜາ (Micrometer)	ແບບພາຍໃນ/ນອກ
	20. ເຄື່ອງຊັ່ງນ້ຳໜັກແບບອີ ເລັກໂຕຣນິກ.	ສຳລັບຊັ່ງນ້ຳໜັກລະຫວ່າງ 1 g ແລະ 3 kg
4. ທົ່ວໄປ	21. ເຄື່ອງເຕົາອົບແບບແຫ້ງ	ອຸ່ນຫະພູມສະຫວ່າງ (80 ~ 150)°C ± 1°C
	22. ຕູ້ເຢັນ	4°C ຫຼື ຕ່ຳກວ່າສຳລັບເກັບມ້ຽນຕົວຢ່າງ
	23. ຫ້ອງທົດລອງ	ອຸ່ນຫະພູມຕ້ອງຢູ່ລະຫວ່າງ (15 ~30)°C ± 2°C, ຄວາມ ຊຸ່ມຕ້ອງສາມາດປັບໄດ້ພາຍໃນ (30 ~ 95) % ± 10 %

ມາດຕາ 11 ການກວດສອບນ້ຳໜັກວັດສະດຸຫຸ້ມຫໍ່ຂອງສິນຄ້າ

ການກວດສອບວັດສະດຸຫຸ້ມຫໍ່ຂອງສິນຄ້າ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຄິດໄລ່ປະລິມານຂອງວັດສະດຸຫຸ້ມຫໍ່ທີ່ນຳໃຊ້ແລ້ວ ຫຼື ພາຊະນະທີ່ຍັງບໍ່ໄດ້ໃຊ້ຫຸ້ມຫໍ່.

2. ສຸ່ມເອົາຕົວຢ່າງຂອງຊຸດການຜະລິດວັດສະດຸຫຸ້ມຫໍ່ເບື້ອງຕົ້ນແຕ່ 10 ຕົວຢ່າງ ຫຼື ຫຼາຍກວ່ານັ້ນ ໂດຍການວັດແທກນ້ຳໜັກຂອງວັດສະດຸຫຸ້ມຫໍ່ແຕ່ລະອັນ ໂດຍໃຊ້ຕົວຢ່າງທີ່ເກັບຈາກວັດສະດຸຫຸ້ມຫໍ່ ຫຼື ຊຸດທີ່ກວດສອບໃນເວລາທີ່ກຳລັງຫຸ້ມຫໍ່.

3. ໃຫ້ຄິດໄລ່ຄ່າຜິດພາດມາດຕະຖານຂອງນ້ຳໜັກສະເລ່ຍ ໃນວັດສະດຸຫຸ້ມຫໍ່ ແລະ ຕົວຢ່າງວັດສະດຸຫຸ້ມຫໍ່ເບື້ອງຕົ້ນ ແລະ ຄິດໄລ່ປະລິມານຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນ ຕາຕະລາງ 6.6

ຕາຕະລາງ 6: ເງື່ອນໄຂການກວດສອບອັດສະດຸຫຸ້ມຫໍ່.

ເງື່ອນໄຂ	ການໃຊ້ອັດສະດຸຫຸ້ມຫໍ່
ຫາກຄ່າສະເລຍຂອງນ້ຳໜັກອັດສະດຸຫຸ້ມຫໍ່ ≤ 10% ຂອງປະລິມານທີ່ສະແດງ	ກວດນ້ຳໜັກອັດສະດຸຫຸ້ມຫໍ່ຂອງສິນຄ້າຈຳນວນ 10 ຕົວຢ່າງ ເພື່ອມາຄ່າສະເລຍ (ການກວດສອບແບບບໍ່ທຳລາຍສິນຄ້າ)
ຫາກຄ່າສະເລຍຂອງນ້ຳໜັກອັດສະດຸຫຸ້ມຫໍ່ > 10% ຂອງປະລິມານທີ່ສະແດງ ແລະ ຄ່າບ່ຽງເບນມາດຕະຖານ < 0.25 ຄ່າຜິດພາດທີ່ຍອມຮັບໄດ້	ກວດນ້ຳໜັກອັດສະດຸຫຸ້ມຫໍ່ຂອງສິນຄ້າຈຳນວນ 25 ຕົວຢ່າງຂອງສິ່ງຫຸ້ມຫໍ່ ເພື່ອມາຄ່າສະເລຍ (ການກວດສອບແບບບໍ່ທຳລາຍສິນຄ້າ)
ຫາກຄ່າສະເລຍຂອງນ້ຳໜັກອັດສະດຸຫຸ້ມຫໍ່ > 10% ຂອງປະລິມານທີ່ສະແດງ ແລະ ຄ່າບ່ຽງເບນມາດຕະຖານ > 0.25 ຄ່າຜິດພາດທີ່ຍອມຮັບໄດ້	ບໍ່ສາມາດນຳໃຊ້ຄ່າສະເລຍຂອງນ້ຳໜັກອັດສະດຸຫຸ້ມຫໍ່; ໃຫ້ອັດແທກນ້ຳໜັກຂອງແຕ່ລະຕົວຢ່າງ ແລະ ນຳໃຊ້ຂໍ້ມູນເພື່ອຄິດໄລ່ຈຳນວນທີ່ກຳນົດຕົວຢ່າງ (ການກວດສອບແບບທຳລາຍສິນຄ້າ)

ໝວດທີ 3
ການກວດສອບສິນຄ້າຫຸ້ມຫໍ່

ມາດຕາ 12 ຮູບແບບການກວດສອບສິນຄ້າຫຸ້ມຫໍ່

ການກວດສອບ ມີ ສາມ ຮູບແບບ ດັ່ງນີ້:

1. ກວດສອບສິນຄ້າຫຸ້ມຫໍ່ ກ່ອນນຳເຂົ້າ, ສົ່ງອອກ, ຜະລິດ ແລະ ຈຳໜ່າຍ;

2. ກວດສອບຕາມແຜນປົກກະຕິ ໜຶ່ງຄັ້ງຕໍ່ປີ, ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

3. ກວດສອບແບບກະທັນຫັນ ແລະ ຕາມການຮ້ອງຮຽນແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ມາດຕາ 13 ການສະເໜີກວດສອບສິນຄ້າຫຸ້ມຫໍ່

ການສະເໜີຂໍກວດສອບສິນຄ້າຫຸ້ມຫໍ່ ທຸກປະເພດ ຕາມລາຍການທີ່ໄດ້ກຳນົດໄວ້ ໃນເອກະສານຊ້ອນທ້າຍ 1 ກ່ອນການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢູ່ ສປປ ລາວ ສາມາດຍື່ນຄຳຮ້ອງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອກວດສອບຄວາມຖືກຕ້ອງຂອງເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດ;
3. ສຳເນົາໃບທະບຽນວິສາຫະກິດ;
4. ຕົວຢ່າງສິນຄ້າຫຸ້ມຫໍ່.

ມາດຕາ 14 ການພິຈາລະນາ

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ, ຂະແໜງອຸດສາຫະກຳແລະ ການຄ້າ ຕ້ອງແຕ່ງຕັ້ງເຈົ້າໜ້າທີ່ ເພື່ອໄປກວດສອບຄວາມຖືກຕ້ອງຂອງສິນຄ້າຫຸ້ມຫໍ່ ຕາມການແບ່ງຂັ້ນຄຸ້ມຄອງ.

ຖ້າຫາກການກວດສອບສິນຄ້າຫຸ້ມຫໍ່ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ, ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງອອກໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ ພາຍໃນ ສິບວັນ ນັບແຕ່ວັນໄດ້ຮັບຜົນການກວດສອບ./.

ຖ້າຫາກຜົນການກວດສອບບໍ່ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ຈະບໍ່ສາມາດອອກໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ ແລະ ສະເໜີໃຫ້ປັບປຸງຄືນແລ້ວຈຶ່ງສະເໜີຕໍ່ຂະແໜງອຸດສາຫະກຳແລະ ການຄ້າ ພິຈາລະນາອອກໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່.

ມາດຕາ 15 ອາຍຸ ແລະ ການຕໍ່ອາຍຸໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່

ໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ ມີອາຍຸການນຳໃຊ້ ໜຶ່ງປີ ແລະ ສາມາດຕໍ່ອາຍຸໄດ້.

ການຕໍ່ອາຍຸໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ ໃຫ້ຍື່ນຄຳຮ້ອງຂໍຕໍ່ອາຍຸໃບຢັ້ງຢືນດັ່ງກ່າວ ກ່ອນໝົດອາຍຸນຳໃຊ້ ພາຍໃນ ສາມສິບວັນລັດຖະການ, ຊຶ່ງຕ້ອງຍື່ນຄຳຮ້ອງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ໂດຍປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ສຳເນົາໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ ສະບັບຕົ້ນທີ່ຢັ້ງຢືນປີຜ່ານມາ;
3. ຕົວຢ່າງສິນຄ້າຫຸ້ມຫໍ່.

ໝວດທີ 4
ການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່

ມາດຕາ 16 ການໝາຍສິນຄ້າຫຸ້ມຫໍ່

ການໝາຍສິນຄ້າຫຸ້ມຫໍ່ ແມ່ນການຢັ້ງຢືນຄວາມຖືກຕ້ອງທາງດ້ານປະລິມານຂອງສິນຄ້າ ໂດຍສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5, 6, 7, 8, 9, 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການ.

ມາດຕາ 17 ການສະເໜີຂໍການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສະເໜີຂໍການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ໃຫ້ຍື່ນໜັງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ຊຶ່ງຕ້ອງປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບຢັ້ງຢືນການຝຶກອົບຮົມດ້ານການກວດສອບສິນຄ້າຫຸ້ມຫໍ່ ຈາກກົມມາດຕະຖານ ແລະ ວັດແທກ ຫຼື ໜ່ວຍງານທີ່ໄດ້ຖືກມອບໝາຍ;
4. ຄູ່ມືດ້ານຄຸນນະພາບ ກ່ຽວກັບການບັນຈຸສິນຄ້າຫຸ້ມຫໍ່ ຫຼື ເອກະສານ ກ່ຽວກັບການລະບົບມາດຕະຖານສາກົນ ເປັນຕົ້ນ ISO 9001 ແລະ ISO 14001;
5. ສຳເນົາຫຼັກຖານ ກ່ຽວກັບລາຍລະອຽດເຄື່ອງມືອຸປະກອນວັດແທກທີ່ຈຳເປັນ ທີ່ໃຊ້ໃນການກວດ ແລະ ຄວບຄຸມທາງດ້ານປະລິມານຂອງສິນຄ້າ ທີ່ໄດ້ຮັບການສອບທຽບຢ່າງຖືກຕ້ອງ ແລະ ສອດຄ່ອງຕາມມາດຕະຖານສາກົນ;
6. ສຳເນົາລາຍງານຜົນການກວດສອບດ້ານປະລິມານຂອງຜະລິດຕະພັນ ໃນໄລຍະສາມເດືອນຜ່ານມາ;
7. ລາຍຊື່ຜູ້ຮັບຜິດຊອບໃນການກວດສອບດ້ານປະລິມານ;
8. ບົດລາຍງານຜົນການກວດສອບດ້ານປະລິມານ;
9. ສິ່ງຈຳນວນສິນຄ້າ 3 ຕົວຢ່າງແຕ່ລະສິນຄ້າຫຸ້ມຫໍ່ເພື່ອເອົາມາກວດສອບ ແລະ ຢັ້ງຢືນ.

ກໍລະນີສິນຄ້າຫຸ້ມຫໍ່ ທີ່ມີໃບຢັ້ງຢືນການໝາຍສິນຄ້າ ຈາກປະເທດຕົ້ນທາງ ທີ່ມີສັນຍາຮັບຮູ້ຊຶ່ງກັນ ແລະ ກັນ ຈຶ່ງຖືການຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ໃຫ້ເລີຍ ໂດຍບໍ່ຕ້ອງອອກໃບຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່

ມາດຕາ 18 ການພິຈາລະນາຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້, ກົມມາດຕະຖານ ແລະ ວັດແທກ ຕ້ອງແຕ່ງຕັ້ງເຈົ້າໜ້າທີ່ ເພື່ອລົງກວດກາ ແລະ ປະເມີນ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີຮັບເອກະສານເປັນຕົ້ນໄປ, ຖ້າຫາກເຫັນວ່າຜົນການລົງກວດກາ ແລະ ປະເມີນ ມີຄວາມຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ, ກົມມາດຕະຖານ ແລະ ວັດແທກ ຕ້ອງອອກພິຈາລະນາໃບຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີສຳເລັດການລົງກວດກາ ແລະ ປະເມີນເປັນຕົ້ນໄປ.

ຖ້າຜົນການລົງກວດກາ ແລະ ປະເມີນ ບໍ່ສອດຄ່ອງຕາມກົດໝາຍ ແລະ ລະບຽບການ, ຕ້ອງແຈ້ງການເປັນລາຍລັກອັກສອນໃຫ້ຜູ້ສະເໜີຮັບຊາບ ພາຍໃນ ຫ້າວັນລັດຖະການ ເພື່ອດຳເນີນການປັບປຸງແກ້ໄຂສິ່ງທີ່ບໍ່ສອດຄ່ອງ ພາຍໃນ ສິບຫ້າວັນລັດຖະການ ນັບແຕ່ວັນທີແຈ້ງການເປັນຕົ້ນໄປ, ຈຶ່ງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ພິຈາລະນາລົງກວດກາ ແລະ ປະເມີນຄືນ.


ມາດຕາ 19 ອາຍຸ ແລະ ການຕໍ່ອາຍຸໃບຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່

ໃບຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ມີອາຍຸນຳໃຊ້ ສາມ ປີ ແລະ ສາມາດຍື່ນຕໍ່ອາຍຸໄດ້.

ການຕໍ່ອາຍຸໃບຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ໃຫ້ຍື່ນຄຳຮ້ອງຂໍຕໍ່ອາຍຸໃບຢັ້ງຢືນດັ່ງກ່າວ ກ່ອນໝົດອາຍຸນຳໃຊ້ ພາຍໃນ ສາມສິບວັນລັດຖະການ ຊຶ່ງຕ້ອງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 20 ການຕິດການໝາຍສິນຄ້າຫຸ້ມຫໍ່

ສິນຄ້າຫຸ້ມຫໍ່ ທີ່ໄດ້ຜ່ານການຢັ້ງຢືນສຳເລັດ ຕ້ອງໄດ້ຕິດການໝາຍຢັ້ງຢືນສິນຄ້າຫຸ້ມຫໍ່ ຢູ່ດ້ານໜ້າ ຫຼື ດ້ານຫຼັງ ຂອງປະລິມານທີ່ສະແດງ, ຊຶ່ງມີສັນຍາລັກ ດັ່ງນີ້:



ມາດຕາ 21 ການໂຈະການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່

ໃບຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ຈະຖືກໂຈະ ກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີໂຈະດ້ວຍຄວາມສະໝັກໃຈ ຊຶ່ງຕ້ອງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ແຕ່ຕ້ອງສະເໜີກ່ອນການໂຈະກິດຈະການດັ່ງກ່າວ ພາຍໃນ ຫົກສິບວັນ;

2. ກວດພົບເຫັນປະລິມານຂອງສິນຄ້າບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕາມມາດຕະຖານ ແລະ ບໍ່ຍອມລາຍງານຂໍ້ມູນ ຈະຖືກກ່າວເຕືອນ, ເຮັດບົດບັນທຶກ ເພື່ອປັບປຸງແກ້ໄຂ, ຖ້າຫາກຍັງບໍ່ປັບປຸງແກ້ໄຂ ຈະຖືກໂຈະໃບຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ພາຍໃນ ສິບຫ້າວັນ;

3. ນຳໃຊ້ໃບຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ທີ່ໝົດອາຍຸ

ມາດຕາ 22 ການຍົກເລີກການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່

ການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ຈະຖືກຍົກເລີກ ກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີຍົກເລີກດ້ວຍຄວາມສະໝັກໃຈ ຊຶ່ງຕ້ອງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ແຕ່ຕ້ອງສະເໜີກ່ອນການຍົກເລີກກິດຈະການດັ່ງກ່າວ ພາຍໃນ ຫົກສິບວັນ;

2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍຫຼັງທີ່ຖືກສັ່ງໂຈະ ແລະ ຍັງສືບຕໍ່ເຄື່ອນໄຫວໃນເວລາຖືກໂຈະ;

3. ຜູ້ປະກອບການຂາດເງື່ອນໄຂ, ນຳໃຊ້ຫຼັກຖານປອມ ຫຼື ແຈ້ງຂໍ້ມູນທີ່ບໍ່ເປັນຈິງໃຫ້ແກ່ເຈົ້າໜ້າທີ່;

4. ນຳໃຊ້ການໝາຍຢັ້ງຢືນສິນຄ້າຫຸ້ມຫໍ່ຕິດໃສ່ສິນຄ້າອື່ນ ທີ່ບໍ່ໄດ້ຮັບອະນຸຍາດ ຫຼື ຕິດໃສ່ສິນຄ້າທີ່ຖືກຍົກເລີກການຢັ້ງຢືນໄປແລ້ວ;

5. ມີຄຳຕັດສິນຈາກສານປະຊາຊົນ ໃຫ້ຢຸດເຊົາການດຳເນີນກິດຈະກຳ.

ໝວດທີ 5
ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ

ມາດຕາ 23 ສິດຂອງຜູ້ດຳເນີນທຸລະກິດ

ຜູ້ດຳເນີນທຸລະກິດ ມີສິດ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຈາກການດຳເນີນທຸລະກິດ;

2. ໂຄສະນາ ແລະ ເຜີຍແຜ່ ກ່ຽວກັບສິນຄ້າຫຸ້ມຫໍ່ ທີ່ໄດ້ຮັບການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ແລະ ຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່;

3. ຮ້ອງຂໍຄວາມເປັນທຳຕໍ່ພາກສ່ວນທີ່ກ່ຽວຂ້ອງ ຫາກເຫັນວ່າການກວດສອບສິນຄ້າຫຸ້ມຂອງຕົນບໍ່ໄດ້ຮັບຄວາມເປັນທຳ;

4. ສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເພື່ອກວດສອບຄືນສິນຄ້າ ທີ່ເຫັນວ່າປະລິມານບໍ່ຖືກຕ້ອງ.

5. ປະຕິບັດສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 24 ພັນທະຂອງຜູ້ດຳເນີນທຸລະກິດ

ຜູ້ດຳເນີນທຸລະກິດ ມີພັນທະ ດັ່ງນີ້:

1. ກ່ອນນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍສິນຄ້າຫຸ້ມຫໍ່ ຕ້ອງໄດ້ຜ່ານການກວດສອບ ແລະ ຢັ້ງຢືນຄວາມຖືກຕ້ອງຈາກອົງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່;

2. ຕ້ອງໄດ້ສົ່ງລາຍງານການກວດສອບປະລິມານສິນຄ້າຫຸ້ມຫໍ່ ໃຫ້ແກ່ກົມມາດຕະຖານ ແລະ ວັດແທກ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ເດືອນ ສຳລັບສິນຄ້າທີ່ໄດ້ຮັບການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່;

3. ຮັບຜິດຊອບຕໍ່ທຸກຜົນເສຍຫາຍທີ່ເກີດຂຶ້ນຈາກສິນຄ້າຫຸ້ມຫໍ່ທີ່ຕົນໄດ້ດຳເນີນທຸລະກິດນັ້ນ;

4. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການກວດສອບ ແລະ ການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ແຕ່ລະໄລຍະ;

5. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ຂະແໜງອຸດສາຫະກຳ ແລະ ການຄ້າ ໃນການລົງກວດສອບສິນຄ້າຫຸ້ມຫໍ່ ໃນແຕ່ລະຄັ້ງ;

6. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ./.

ໝວດທີ 6
ຂໍ້ຫ້າມ

ມາດຕາ 25 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ ແລະ ແຊກແຊງການເຮັດວຽກຂອງເຈົ້າໜ້າທີ່ກວດສອບສິນຄ້າຫຸ້ມຫໍ່;
2. ໂຄສະນາ ແລະ ສົ່ງເສີມ ສິນຄ້າຫຸ້ມຫໍ່ທີ່ບໍ່ໄດ້ຜ່ານການກວດສອບຢ່າງຖືກຕ້ອງ;
3. ປ້ອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບການກວດສອບສິນຄ້າຫຸ້ມຫໍ່;
4. ຊ່ວຍເຫຼືອ ແລະ ປົກປ້ອງຜູ້ລະເມີດຂໍ້ຕົກລົງສະບັບນີ້;
5. ປິດບັງ ແລະ ເຊື່ອງອຳ ການກະທຳທີ່ເປັນການລະເມີດລະບຽບກົດໝາຍ;
6. ມີພຶດຕິກຳອື່ນ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

ມາດຕາ 26 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ

ຫ້າມຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍສິນຄ້າຫຸ້ມຫໍ່ ທີ່ບໍ່ໄດ້ຜ່ານການກວດສອບ ແລະ ຢັ້ງຢືນຄວາມຖືກຕ້ອງຈາກອົງການຄຸ້ມຄອງ ແລະ ກວດສອບສິນຄ້າຫຸ້ມຫໍ່;
2. ນຳໃຊ້ການໝາຍສິນຄ້າຫຸ້ມຫໍ່ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຂັດຂວາງການປະຕິບັດງານຂອງເຈົ້າໜ້າທີ່ລົງກວດສອບສິນຄ້າຫຸ້ມຫໍ່ໃນການລົງກວດສອບ ແລະ ກວດກາ;
4. ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ກວດສອບ;
5. ປອມແປງເອກະສານການຢັ້ງຢືນ ກ່ຽວກັບສິນຄ້າຫຸ້ມຫໍ່;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

ມາດຕາ 27 ຂໍ້ຫ້າມສຳລັບເຈົ້າໜ້າທີ່ກວດສອບສິນຄ້າຫຸ້ມຫໍ່

ຫ້າມເຈົ້າໜ້າທີ່ກວດສອບສິນຄ້າຫຸ້ມຫໍ່ ມີພຶດຕິກຳ ດັ່ງນີ້:

1. ຜູ້ທີ່ບໍ່ໄດ້ຮັບການແຕ່ງຕັ້ງ ໄປປະຕິບັດໜ້າທີ່ໂດຍບໍ່ໄດ້ຮັບອະນຸຍາດ;
2. ຂາດຄວາມຮັບຜິດຊອບ ແລະ ປະລະໜ້າທີ່ຕໍ່ວຽກງານກວດສອບສິນຄ້າຫຸ້ມຫໍ່;
3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງຕໍ່ບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ;
4. ຂໍເອົາ, ທວງເອົາ, ຮັບສິນບົນ, ສວຍໃຊ້ໜ້າທີ່ເພື່ອຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;
5. ປອມແປງ, ແກ່ຍາວເວລາ, ຖ່ວງດຶງເອກະສານການຢັ້ງຢືນ ແລະ ເປີດເຜີຍຄວາມລັບທາງທຸລະກິດ;
6. ມີພຶດຕິກຳອື່ນ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

ໝວດທີ 7
ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່

ມາດຕາ 28 ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິນຄ້າຫຸ້ມຫໍ່

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແບ່ງອອກເປັນ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນກົມມາດຕະຖານ ແລະ ວັດແທກ;
2. ຂັ້ນແຂວງ ແມ່ນພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ;
3. ຂັ້ນເມືອງ ແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

ມາດຕາ 29 ສິດ ແລະ ໜ້າທີ່ ຂອງກົມມາດຕະຖານ ແລະ ອັດແທກ

ກົມມາດຕະຖານ ແລະ ອັດແທກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່ ໃຫ້ສັງຄົມຮັບຊາບ;
3. ແຕ່ງຕັ້ງເຈົ້າໜ້າທີ່ ເພື່ອລົງໄປກວດສອບຄວາມຖືກຕ້ອງຂອງສິນຄ້າຫຸ້ມຫໍ່;
4. ອອກ ແລະ ຕໍ່ອາຍຸ ໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ ທີ່ໄດ້ຜ່ານການກວດກາຖືກຕ້ອງ;
5. ອອກ, ຕໍ່ອາຍຸ, ໂຈະ ແລະ ຍົກເລີກ ໃບຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່;
6. ເກັບຕົວຢ່າງສິນຄ້າຫຸ້ມຫໍ່ໄປກວດສອບ ກ່ຽວກັບຂະໜາດ, ນ້ຳໜັກ, ມວນສານ ແລະ ບໍລິມາດ ທີ່ໄດ້ລະບຸໄວ້ໃນສະຫຼາກຂອງສິນຄ້າຫຸ້ມຫໍ່ ເພື່ອໃຫ້ສອດຄ່ອງຕາມລະບຽບການເຕັກນິກ, ພາກພື້ນ ແລະ ສາກົນ;
7. ດຳເນີນການຕິດຕາມ, ກວດກາ ແລະ ກວດສອບສິນຄ້າຫຸ້ມຫໍ່ ຕາມໂຮງງານທີ່ຜະລິດສິນຄ້າໄດ້ຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່, ສົ່ງອອກ ແລະ ໄດ້ຮັບຮອງລະບົບມາດຕະຖານສາກົນ ISO;
8. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່;
9. ຮັບ ແລະ ພິຈາລະນາຄຳສະເໜີແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່;
10. ສະຫຼຸບລາຍງານການຈັດຕັ້ງປະຕິບັດ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່ ໃຫ້ຂັ້ນເທິງຮັບຊາບເປັນແຕ່ລະໄລຍະ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 30 ສິດ ແລະ ໜ້າທີ ຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ

ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່ ໃຫ້ສັງຄົມຮັບຊາບ;
2. ແຕ່ງຕັ້ງເຈົ້າໜ້າທີ່ ເພື່ອລົງໄປກວດສອບຄວາມຖືກຕ້ອງຂອງສິນຄ້າຫຸ້ມຫໍ່;
3. ອອກ ແລະ ຕໍ່ອາຍຸ ໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ ທີ່ໄດ້ຜ່ານການກວດກາຖືກຕ້ອງ;
4. ຮັບຄຳຮ້ອງຂໍການຢັ້ງຢືນການໝາຍສິນຄ້າຫຸ້ມຫໍ່ແລ້ວ ນຳສົ່ງຕໍ່ກົມມາດຕະຖານ ແລະ ອັດແທກ ເພື່ອພິຈາລະນາຕາມຂັ້ນຕອນ;
5. ເກັບຕົວຢ່າງສິນຄ້າຫຸ້ມຫໍ່ໄປກວດສອບ ກ່ຽວກັບຂະໜາດ, ນ້ຳໜັກ, ມວນສານ ແລະ ບໍລິມາດ ທີ່ໄດ້ລະບຸໄວ້ໃນສະຫຼາກຂອງສິນຄ້າຫຸ້ມຫໍ່ ເພື່ອໃຫ້ສອດຄ່ອງຕາມລະບຽບການເຕັກນິກ, ພາກພື້ນ ແລະ ສາກົນ;
6. ດຳເນີນການຕິດຕາມ, ກວດກາ ແລະ ກວດສອບສິນຄ້າຫຸ້ມຫໍ່ ຕາມໂຮງງານທີ່ບໍ່ໄດ້ຮັບການຮັບຮອງລະບົບມາດຕະຖານສາກົນ ISO;
7. ປະສານສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່;
8. ຮັບ ແລະ ພິຈາລະນາຄຳສະເໜີແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່;
9. ສະຫຼຸບລາຍງານການຈັດຕັ້ງປະຕິບັດ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່ ໃຫ້ກົມມາດຕະຖານ ແລະ ອັດແທກຊາບ ເປັນແຕ່ລະໄລຍະ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 31 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່ ໃຫ້ສັງຄົມຮັບຊາບ;
2. ແຕ່ງຕັ້ງເຈົ້າໜ້າທີ່ ເພື່ອລົງໄປກວດສອບຄວາມຖືກຕ້ອງຂອງສິນຄ້າຫຸ້ມຫໍ່;
3. ອອກ ແລະ ຕໍ່ອາຍຸ ໃບຢັ້ງຢືນການກວດສອບສິນຄ້າຫຸ້ມຫໍ່ ທີ່ໄດ້ຜ່ານການກວດກາຖືກຕ້ອງ;
4. ເກັບຕົວຢ່າງສິນຄ້າຫຸ້ມຫໍ່ໄປກວດສອບ ກ່ຽວກັບຂະໜາດ, ນ້ຳໜັກ, ມວນສານ ແລະ ບໍລິມາດ ທີ່ໄດ້ລະບຸໄວ້ໃນສະຫຼາກຂອງສິນຄ້າຫຸ້ມຫໍ່ ເພື່ອໃຫ້ສອດຄ່ອງຕາມລະບຽບການເຕັກນິກ, ພາກພື້ນ ແລະ ສາກົນ;
5. ດຳເນີນການຕິດກວດກາ, ຕິດຕາມ ແລະ ກວດສອບສິນຄ້າຫຸ້ມຫໍ່ ຕາມໂຮງງານທີ່ບໍ່ການຮັບຮອງລະບົບມາດຕະຖານສາກົນ ISO;
6. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່;
7. ສະຫຼຸບລາຍງານການຈັດຕັ້ງປະຕິບັດ ກ່ຽວກັບວຽກງານຄຸ້ມຄອງສິນຄ້າຫຸ້ມຫໍ່ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງຊາບ ເປັນແຕ່ລະໄລຍະ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ໝວດທີ 8
ບົດບັນຍັດສຸດທ້າຍ

ມາດຕາ 32 ການຈັດຕັ້ງປະຕິບັດ

ມອບໃຫ້ກົມມາດຕະຖານ ແລະ ວັດແທກ ເປັນເຈົ້າການປະສານສົມທົບພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 33 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສິ່ສິບຫ້າວັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງສິນຄ້າຫຸ້ມຫໍ່ ສະບັບເລກທີ 1572/ກວຕ, ລົງວັນທີ 27 ພະຈິກ 2020.

ລັດຖະມົນຕີ

ມະໄລທອງ ກົມມະສິດ